# ບົດຮຽນໂຮງຮຽນວັນອາທິດ

**ວັນອາທິດ ທີ 30 ມີນາ 2008 ( 03-30-2008 )**

## ດ້ວຍຄວາມຮັກເພື່ອອົງພຣະເຢຊູ

**ຂໍ້ພຣະຄັມພີໃນບົດຮຽນ:** ( ພຣະນິມິດ. 1:9-13 , 17-18; 3:14-22 )

**ຄໍາຖາມຊີວິດ:** ເປັນຫຍັງຈຶ່ງຄວນເປັນສິ່ງທີ່ຕື່ນເຕັ້ນຍິນດີໃນການທີ່ເປັນຜູ້ຮູ້ແລະຕິດຕາມພຣະເຢຊູຄຣິດ?

**ຄວາມຈິງໃນພຣະຄັມພີ:** ພຣະເຢຊູຜູ້ຄືນພຣະຊົນຊີວິດຖືກຸນແຈທີ່ຈະໄຂໄປສູ່ການມີໄຊຊະນະໃນການດໍາຣົງຊີວິດ, ດັ່ງນັ້ນພຣະອົງຈຶ່ງຊົງໃຫ້ຄວາມອົບອຸ່ນໃຫ້ຜູ້ທີ່ເຊື່ອທັງຫລາຍໃຫ້ມີກໍາລັງຕໍ່ສູ້ກັບຄວາມພຽງພໍຂອງຕົນທີ່ກໍາລັງເຕີບໂຕຂຶ້ນແລະປ່ຽນເປັນຈິດວິນຍານທີ່ບໍ່ຮ້ອນຮົນ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍທ່ານໃຫ້ດໍາຣົງຊີວິດຢູ່ໃນແຕ່ລະວັນດ້ວຍຄວາມໝັ້ນໃຈແລະຄວາມຫວັງທີ່ພຣະເຈົ້າໄດ້ຊົງປະທານໃຫ້ໂດຍ:

* ຍອມຮັບໃນຫຼັກຖານຄວາມພຽງພໍທາງຈິດວິນຍານແລະການເມີນເສີຍທີ່ມັນກໍ່ຕົວໃຫຍ່ຂຶ້ນຢູ່ໃນຕົວຂອງເຮົາ.

* ຫັນໜີຈາກຄວາມພຽງພໍທາງຈິດວິນຍານທີ່ກໍ່ຕົວໃຫຍ່ຂຶ້ນຢູ່ໃນຕົວຂອງເຮົາ.

### ສຶກສາພຣະຄັມພີ

ທ່ານເປັນສະມາຊິກຂອງໂບດທີ່ເປັນແບບໃດ? ຂ້າພະເຈົ້າບໍ່ໄດ້ຖາມກ່ຽວກັບເຣື່ອງຄວາມຄວາມໃຫຍ່ຂອງໂບດ, ດົນຕຣີລັກສະນະໃດ. ຂ້າພະເຈົ້າຖາມເຣື່ອງກ່ຽວກັບຈຸດເຂັ້ມແຂງຫລືຈຸດອ່ອນທາງດ້ານຈິດວິນຍານ. ມີຈຸດແຂງທາງດ້ານທິສດີແລະຈຸດອ່ອນທາງດ້ານພາກປະຕິບັດ-ຫລືບາງທີອັນໃດອັນນຶ່ງ? ຄວາມບາບອາດຈະຄຸກຄາມແລະເບິ່ງຄືກັນກັບຄົນຝ່າຍໂລກຫລາຍກວ່າຄືກັບຄົນຂອງໂບດບໍ່? ໂບດຂອງທ່ານອາດຈະມີລັກສະນະທີ່ຄ້າຍຄືໂບດທັງເຈັດທີ່ໄດ້ກ່າວເຖິງໃນພຣະທັມພຣະນິມິດ 1-3.

ໃນບົດຮຽນຂອງມື້ນີ້ຈະບໍ່ກ່າວເຖິງແຕ່ພຽງເຣື່ອງຂອງຫລາຍໆ ໂບດຮວມກັນເທົ່ານັ້ນແຕ່ຈະກ່າວເຖິງສ່ວນຕົວພິເສດຂອງແຕ່ລະໂບດອີກດ້ວຍ. ຍ້ອນພາກປະຕິບັດຂອງໂບດທັງຫລາຍເຫລົ່ານີ້ຈະມີສ່ວນປະກອບໃຫ້ແກ່ຄົນທີ່ເຊື່ອນໍາ, ດັ່ງນັ້ນພວກເຮົາແຕ່ລະຄົນຄວນຈະມີການສໍາຣວດເບິ່ງການດໍາຣົງຊີວິດຂອງຕົວເອງ. ພຣະເຢຊູຄຣິດເຈົ້າໄດ້ຊົງຟື້ນຄືນພຣະຊົນແລະມີຣິດອໍານາດທີ່ຈະຊົງປະທານໃຫ້ແກ່ພວກເຮົາເພື່ອຈະໃຊ້ເສີມກໍາລັງໃຈຫລາຍ ໆ ຈຸດທີ່ອ່ອນແອ. ເຮັດແນວໃດພວກເຮົາຈຶ່ງຈະເອົາຊະນະຄືຢູ່ເໜືອຄວາມບາບໃຫ້ໄດ້?

### 1: ພຣະເຢຊູຊົງຢູ່ກັບເຮົາເຖິງແມ່ນວ່າຈະຢູ່ໃນຄວາມຍາກລໍາບາກ: ( ພນມ. 1: 9-11)

ໃນປະມານປີ ຄສ 95 , ອັຄສາວົກໂຢຮັນຖືກຈັບໄປປ່ອຍໄວ້ທີ່ເກາະປັດໂມດ(ເປັນເກາະທີ່ຢູ່ໃນທະເລ ແອກຣົນ ປະມານ 37 ໄມຈາກຝັ່ງທະເລຂອງປະເທດເຕີກີໃນປັດຈຸບັນ ). ຈັກກະພັດໂຣມໂດມີແຕນ ໄດ້ສັ່ງຈັບໂຢຮັນໄປປ່ອຍຍ້ອນເພິ່ນເທສນາສັ່ງສອນຂ່າວປະເສີດ-**ດ້ວຍສາເຫດທີ່ພຣະວັຈະນະຂອງພຣະເຈົ້າໄດ້ເປັນພະຍານເປີດເຜີຍກ່ຽວກັບເຣື່ອງຂອງພຣະເຢຊູ.** ພຣະຜູ້ເປັນເຈົ້າຜູ້ໄດ້ຊົງຄືນພຣະຊົນໄດ້ຊົງປາກົດຕົວໃຫ້ໂຢຮັນໄດ້ເຫັນແລະໄດ້ຊົງກ່າວແກ່ທ່ານໃຫ້ຂຽນໄວ້ໃນໜັງສືມ້ວນແລະຝາກໄປໃຫ້ຄຣິສຕະຈັກທັງເຈັດທີ່ຢູ່ໃນເອເຊັຽ ( ພນມ. 1-3 ) ແລະກໍໃຊ້ໄດ້ກັບພວກເຮົາໃນສມັຍນີ້ເຫມືອນກັນ.

ໂຢຮັນໄດ້ສະແດງຕົວຕໍ່ຜູ້ທີ່ຟັງເພິ່ນຄືຄຣິສຕະຈັກທັງເຈັດ**ຄືເປັນພີ່ນ້ອງກັນ.** ພວກເຂົາມີຄວາມເຊື່ອວ່າໂຢ**ຮັນເປັນເພື່ອນຮ່ວມການຍາກລໍາບາກແລະຮ່ວມຣາຊອານາຈັກແລະຮ່ວມການອົດທົນຊຶ່ງເປັນປະສົບການໃນພຣະເຢຊູ.** ໃນຂະນະອໍານາດປົກຄອງໂດມີແຕນຍັງຄົງດໍາເນີນການກົດຂີ່ຂົ່ມເຫັງຄຣິດສະຕຽນໃນຄສ 90 ໄດ້ເພີ້ມທະວີຂຶ້ນ, ໂຢຮັນກໍ

ໄດ້ສະແດງໃຫ້ພີ່ນ້ອງຄຶດສະຕຽນໄດ້ຮູ້ວ່າ**ເພີ່ນຮ່ວມ**ໃນຄວາມເຊື່ອ, ຮ່ວມທຸກແລະ**ມີສ່ວນ**ໃນ**ຣາຊອານາຈັກຂອງພຣະຄຣິດດ້ວຍກັນ.**

ໃນຕົ້ນສັຕວັດບ້ານຂອງໂຢຮັນແມ່ນຢູ່ໃນ**ເມືອງເອເຟໂຊ** ຊຶ່ງເປັນບ່ອນທີ່ໂປໂລໄດ້ພົບຄຣິດສະຈັກທີ່ມີຕັ້ງຢູ່ແລ້ວໃນເຄິ່ງສັຕວັດກ່ອນນັ້ນ, ແລະເປັນບ່ອນໂປໂລໄດ້ພົບກັບຕີໂມທຽວ, ອາກີລາແລະເປຊີລາ, ແລະອາໂປໂລດ້ວຍແລະຍັງເປັນບ່ອນສຳຄັນທີ່ຊ່ວຍເຫລືອພາຣະກິດຂອງພຣະຜູ້ເປັນເຈົ້າໃນລະຍະຕົ້ນພຸ້ນ.

*ໃນຖານະທີ່ທ່ານກໍເປັນພາກສ່ວນນຶ່ງຂອງຄຣິດສະຕຽນທີ່ມີຢູ່ທົ່ວທຸກບ່ອນໃນໂລກນີ້,*
*ທ່ານສາມາດເຮັດສິ່ງໃດໄດ້ແດ່ເພື່ອເປັນການຊ່ວຍເຫລືອພີ່ນ້ອງເຫລົ່ານັ້ນ?*

ຢູ່ໃນບົດຮຽນເລີ້ມຕົ້ນຂອງຂໍ້10 ໄດ້ເປັນສິ່ງຢັ້ງຢືນວ່າໂຢຮັນ**ມີພຣະວິນຍານຂອງພຣະເຈົ້າຊົງນຳໃນວັນຂອງພຣະອົງ** ( **ວັນອາທິດ** ). ດ້ວຍປະສົບການຮວມທັງນິມິດທີ່ໂຢຮັນໄດ້ເຫັນການປາກົດຂອງພຣະຜູ້ເປັນເຈົ້າຜູ້ຊົງຟື້ນຄືນພຣະຊົນດັ່ງທີ່ພວກເຮົາໄດ້ຮຽນໃນພຣະທັມພຣະນິມິດ 1-3. ພຣະ**ສຸຣະສຽງດັງ**ມາຈາກເບື້ອງຫລັງຂ້າພະເຈົ້າ**ເຫມືອນສຽງແກ.** ນີ້ແມ່ນສິ່ງສະແດງອອກມາເຖິງສິດອຳນາດຂອງພຣະອົງທີ່ຈະເວົ້າ. ພຣະອົງໄດ້ບອກກັບໂຢຮັນໃຫ້ຂຽນໃສ່**ຫນັງສືມ້ວນ**ແລະຝາກໄປເຖິງ**ຄຣິສຕະຈັກທັງເຈັດ.**

ຄັ້ງທີນຶ່ງ, ພຣະເຢຊູໄດ້ຊົງເອີ້ນໃຫ້ຄຣິດສະຕຽນຈົ່ງຕັ້ງຫມັ້ນຄົງຢູ່ໃນຄວາມເຊື່ອເດີມເພື່ອຈະທົນໄດ້ຕໍ່ການຖືກຂົ່ມເຫັງແລະພວກເຮົາໃນປັດຈຸບັນກໍຄວນຮຽນເອົາບົດຮຽນນີ້ເຫມືອນກັນ. ທີສອງ, ພວກເຮົາສົມຄວນມີຄວາມຊົມຊື່ນຍິນດີທີ່ພຣະເຢຊູຄຣິດເຈົ້າຜູ້ຊົງຟື້ນຄືນພຣະຊົນແລະໄດ້ສະຖິດຢູ່ນຳພວກເຮົາຄືພຣະວິນຍານບໍຣິສຸດຂອງພຣະອົງ, ບໍ່ວ່າຈະຕົກຢູ່ໃນສະຖານະການໃດ ໆ ທີ່ພວກເຮົາກຳລັງປະເຊີນຢູ່. ທີສາມ, ເຖິງຈະມີສິ່ງກີດຂວາງແລະເຫດການທີ່ເກີດຂື້ນແນວໃດກໍຕາມ, ທີ່ຮ້າຍແຮງປານໃດກໍຕາມ, ພວກເຮົາກໍຍັງສາມາດທີ່ຈະມີຫົນທາງເພື່ອຈະນະມັສການແລະຮັບໃຊ້ພຣະຜູ້ເປັນເຈົ້າໄດ້ຢູ່.

## ໒. <u>ພຣະເຢຊູເປັນພຣະຜູ້ເປັນເຈົ້າຜູ້ຢູ່ເຫນືອຄວາມເປັນແລະຄວາມຕາຍ:</u> ( ພນມ.1:12-13, 17-18 )

ໂຢຮັນຍັງຄົງໄດ້ຮັບນິມິດຕໍ່ໄປຢູ່ໃນຂໍ້ 12 ໃນຂະນະທີ່ເພີ່ນໄດ້ຫລຽວໄປທາງ**ພຣະສຸຣະສຽງ**ແລະໄດ**ເຫັນເຄື່ອງຮອງຕີນໂຄມທອງຄຳເຈັດອັນ.** ( ເປັນເຄື່ອງຫມາຍເຖິງຄຣິດສະຈັກທັງເຈັດ, ຂໍ້ 20). ພຣະເຈົ້າຜູ້ຊົງຟື້ນຄືນພຣະຊົນໄດ້ກ່າວເຖິງຄຣິດສະຈັກທັງເຈັດໃນຂະນະທີ່ພຣະອົງໄດ້ດຳເນີນຢູ່ຖ້າມກາງເຄື່ອງຮອງຕີນໂຄມເຫລົ່ານັ້ນ. ອັຄສາວົກໂຢຮັນໄດ້ເຫັນພຣະເຢຊູ**ຜູ້ຊຶ່ງເຫມືອນບຸດມະນຸດ.** ນີ້ເປັນປະສົບການຈາກນິມິດຫມາຍທີ່ໄດ້ຊົງປະທານໃຫ້ເຫັນເຫດການກ່ອນທີ່ຈະມາເຖິງຄືພຣະຄຣິດ( " ບຸດມະນຸດ " ) ແລະພຣະເຈົ້າທີ່ເປັນພຣະບິດາ( ຊຶ່ງເປັນຢູ່ກ່ອນພຸ້ນໃນສມັຍບູຮານເກົ່າແກ່ " ) ໃນ ດານີເອນ 7:9-14. ບຸດມະນຸດກໍຄືພຣະເຢຊູຊົງເປີດເຜີຍພຣະອົງໃຫ້ຮູ້ດ້ວຍຄວາມພໍໃຈ. ໂຢຮັນໄດ້ຮ່ວມທຸກຮ່ວມສຸກກັບພຣະເຢຊູໃນລະຫວ່າງເລີ້ມຕົ້ນຂອງການອອກໄປປະກາດຂອງພຣະອົງ, ແຕ່ໃນການປາກົດຂອງພຣະອົງຄັ້ງນີ້ແມ່ນພຣະອົງຊົງເປັນພຣະເຈົ້າຜູ້ຊົງຟື້ນຄືນພຣະຊົນມາແລ້ວ ແລະ**ຊົງສວມເຄື່ອງສລອງກວມພຣະບາດແລະຊົງຮັດສາຍປະຄົດທອງຄຳທີ່ພຣະອຸຣະຂອງພຣະອົງ.** ເປັນເຄື່ອງຫມາຍເຖິງກະສັດຜູ້ທີ່ຄົບສົມບູນ.

ໂຢຮັນໄດ້ຕອບຮັບພຣະເຢຊູດ້ວຍຄວາມຊື່ນຊົມຍິນດີ**ແລະກົ້ມລົງແທບພຣະບາດຂອງພຣະອົງເຫມືອນຄົນທີ່ຕາຍແລ້ວ.** ແຕ່ພຣະອົງໄດ້ຢຽດພຣະຫັດກ້ຳຂວາບາຍໂຢຮັນແລະບອກເພີ່ນວ່າ, " **ຢ່າສູ່ຢ້ານ!** " ພຣະເຢຊູແລະຝູງເທວະດາໄດ້ໃຊ້ຄຳເວົ້າຄຳນີ້ຫລາຍໆ ຄັ້ງຢູ່ໃນພຣະຄັມພີ. ຜູ້ຊົງດ້ວຍຣິດທານຸພາບທີ່ເປັນພຣະເຈົ້າ, ພຣະເຢຊູໄດ້ເອີ້ນໂຢຮັນເຂົ້າໄປໃກ້ໆ ພຣະອົງເພື່ອບໍ່ໃຫ້ຢ້ານອີກຕໍ່ໄປ, ແລະພຣະອົງກໍຍັງຊົງເອີ້ນພວກເຮົາໃນທຸກວັນນີ້ເຫມືອນກັນ.

*ມີຄວາມຫມາຍແນວໃດສຳລັບພຣະເຢຊູຄືຄຳທີ່ວ່າ " ເຮົາເປັນຜູ້ຕົ້ນແລະເປັນຜູ້ປາຍ?*

ພຣະເຢຊູໄດ້ຊົງບອກວ່າພຣະອົງ**ເປັນຜູ້ຕົ້ນແລະເປັນຜູ້ປາຍ,** ມີຄວາມຫມາຍເທົ່າທຽມກັນ ( ເວົ້າເຖິງອັກສອນພາສາກຣີກ ຕົວແລກແລະຕົວສຸດທ້າຍ ). ໃນປໂຍກນີ້ໄດ້ບອກໃຫ້ພວກເຮົາຮູ້ແຈ້ງເຖິງເຫດຜົນໃນການຟື້ນຄືນພຣະຊົນຂອງພຣະເຢຊູຄຣິດເຈົ້າຜູ້ຊົງສ້າງສັພທຸກສິ່ງ ( ຢຮ 1: 1-3 ). ພຣະອົງຊົງເປັນເຈົ້າຊີວິດ ເປັນຜູ້ພິພາກສາຜູ້ທີ່ຈະນຳທຸກສິ່ງໃຫ້ໄປເຖິງຈຸດອາວະສານແລະຕຽມພ້ອມໃຫ້ພວກເຮົາໃນຊີວິດອັນຕລອດໄປເປັນນິດ ( ພນມ. 19-22 ).

ພຣະເຢຊູ**ຍັງຊົງເປັນຜູ້ຊົງເປັນຢູ່**, ໂດຍທີ່ໄດ້ອະທິບາຍໃນປະໂຍກນີ້: **ເຮົາໄດ້ຕາຍແລ້ວ, ແຕ່ເບິ່ງແມ, ເຮົາກໍມີຊີວິດຢູ່ຕລອດໄປເປັນນິດ.** ພຣະເຢຊູຊົງເປັນຜູ້ດຽວທີ່ມີໄຊຊະນະຄວາມຕາຍ ( 1 ກຣທ. 15:26 ). ພຣະອົງເປັນຜູ້ຖືກຸນແຈ ( ຊຶ່ງເປັນເຄື່ອງຫມາຍຂອງຜູ້ມີອຳນາດ )ເຫນືອຄວາມເປັນແລະຄວາມຕາຍ, ພຣະອົງຈະເປັນທະນາຍເພື່ອໃນວັນຟື້ນຄືນຊີວິດຂອງເຮົາ. ການຊົງຄືນພຣະຊົນເປັນສິ່ງຢືນຢັນ ແລະເປັນຄວາມຈິງທີ່ຈະສາມາດເຮັດໃຫ້ພວກເຮົາກ້າຫານຫລາຍຂຶ້ນໃນການເປັນຜູ້ຕິດຕາມພຣະເຢຊູ ບໍ່ວ່າໃນຍາມແຫ່ງຄວາມຍາກລຳບາກ-ແລະໃນຍາມພົບກັບຄວາມຕາຍ.

**3. <u>ພຣະເຢຊູປະຕິເສດຈິດວິນຍານທີ່ບໍ່ໃສ່ໃຈຕໍ່ສິ່ງໃດໆ</u>:** ( ພນມ. 3: 14-17 )

ຈະບໍ່ມີສິ່ງໃດທີ່ຫນ້າຢ້ານທີ່ສຸດນອກຈາກເມື່ອເຖິງເວລາທີ່ພຣະເຢຊູໄດ້ຊົງຮູ້ການກະທຳຂອງຄຣິສຕະຈັກຄືໃນຄຳອະທິຖານຂອງພວກເຂົາໄຮ້ສາຣະ-ແລະນັ້ນຄືຄຳສັ່ງໄປເຖິງ**ຄຣິສຕະຈັກທີ່ຢູ່ເມືອງລາວດີເກັຽ.** ເມືອງນີ້ເປັນເມືອງການຄ້າແລະອຸດສາຫະກັມ, ເປັນບ່ອນທີ່ຈະເຣີນ, ສງົບແລະເປັນເມືອງທີ່ຮັ່ງມີ. ຄຣິສຕະຈັກທີ່ໄດ້ເລີ້ມເກີດຂຶ້ນອາດຈະແມ່ນຍ້ອນການອອກໄປປະກາດຜ່ານເມືອງເອເຟໂຊໃນລະຍະເວລາສາມປີກ່ອນຂອງໂປໂລ.

ພຣະເຢຊູໄດ້ບອກເຖິງການຊົງເປັນຢູ່ຂອງພຣະອົງຄື: ນຶ່ງ, ພຣະອົງຊົງເປັນ**ອາແມນ**, ຄວາມຫມາຍໃນພາສາເຮັບເຣີວ່າ " ແມ່ນແລ້ວ ". ສອງ, ພຣະອົງຊົງເປັນ**ອົງບໍຣິສຸດ, ແລະສັດຈິງ**, ຊົງເປັນຜູ້ດຽວທີ່ໄດ້ເປັນພະຍານຝ່າຍພຣະບິດາຂອງພຣະອົງ. ສາມ, ພຣະອົງຊົງເປັນ**ປະຖົມເຫດແຫ່ງສິ່ງສາລະພັດຊຶ່ງພຣະເຈົ້າໄດ້ຊົງສ້າງ.**

ຜູ້ຄົນຢູ່ທີ່ເມືອງລາວດີເກັຽນັ້ນຮັ່ງມີຊັບສົມບັດແຕ່ອັບຈົນດ້ານຈິດວິນຍານ: ພຣະເຢຊູຊົງໄດ້ອະທິບາຍວ່າເຂົາເປັນ**ຄົນທຸກໄຮ້ເຂັນໃຈ, ເປັນຄົນຫນ້າສົງສານ**, ເປັນຄົນຂັດສົນ, ເປັນຄົນຕາບອດແລະເປືອຍກາຍຢູ່. ເປັນພຽງອຸ່ນໆ ຫມາຍເຖິງຄວາມເຊື່ອຂອງຄົນທີ່ຢູ່ເມືອງນີ້ ຊຶ່ງຫມາຍເຖິງຄຣິດສະຕຽນທີ່ບໍ່ໄດ້ປະຕິບັດຕົນໃຫ້ສົມກັບເປັນຄົນຂອງພຣະເຈົ້າ. ທັງບໍ່ຮ້ອນແລະບໍ່ເຢັນທີ່ຖືວ່າເປັນນ້ຳທີ່ດີ, ແຕ່ອຸ່ນໆ ຍ້ອນຈິດວິນຍານທີ່ບໍ່ມີການຝຶກແອບ, ພຣະເຢຊູຊົງບອກວ່າຈະ**ຄາຍ**ພວກເຂົາອອກ**ຈາກປາກ**ຂອງພຣະອົງ. ສິ່ງທີ່ປາກົດພາຍນອກທຸກຢ່າງແມ່ນບໍ່ມີຄວາມສຳຄັນຫຍັງເທົ່າກັບຈິດວິນຍານຂ້າງໃນຂອງຄຣິດສະຕຽນທີ່ຢູ່ໃນເມືອງລາວດີເກັຽ. ພວກເຮົາຄວນຈະທູນຂໍຄວາມຊ່ວຍເຫລືອຈາກພຣະອົງໃນການທີ່ຄົນດີໃຫ້ຄຳຫມັ້ນສັນຍາວ່າພວກເຮົາຈະຝຶກຝົນຈິດວິນຍານໃຫ້ມີຄວາມເຂັ້ມແຂງແລະອົດທົນຫລືໃນສິ່ງອື່ນໆທີ່ແຕກຕ່າງ.

4. <u>ພຣະເຢຊູຈະຊົງປະທານຄວາມໃກ້ຊິດກັບຜູ້ທີ່ຕິດຕາມພຣະອົງ</u> : ( ພນມ. 3: 18-22 )

ຄຣິສຕະຈັກທີ່ເມືອງລາວດີເກັຽສົມຄວນຈະຄືນດີຈາກຄວາມເຫັນແກ່ຕົວແລະຄິດວ່າເຂົາບໍ່ຕ້ອງການພຣະເຈົ້າແລ້ວ. ຜູ້ທີ່ເຊື່ອຄິດວ່າເຂົາບໍ່ຕ້ອງການພຣະເຈົ້າ ຈຶ່ງກາຍເປັນໃຊ້ຊີວິດໂດຍບໍ່ໄດ້ຮັບໃຊ້ພຣະອົງ. ຍ້ອນຄວາມຜິດບາບຄືການເຫັນແກ່ຕົວຂອງເຂົາພຣະເຈົ້າຈະຄາຍເຂົາອອກຈາກປາກຂອງພຣະອົງ ( ຂໍ້ 16 ). ໃນຂະນະທີ່ເຂົາກຳລັງມີຄວາມຮັ່ງມີພ້ອມທຸກຢ່າງທາງດ້ານວັດຖຸ, ເພາະເຂົາບໍ່ຮູ້ຄິດເລີຍວ່າຈິດວິນຍານຂອງເຂົາຍາກຈົນຫລາຍປານໃດ. ຄຳເຕືອນສະຕິໃຫ້**ຊື້ຄຳ**ທີ່ຫລອມບໍຣິສຸດແລ້ວຈາກພຣະເຢຊູ, ເພື່ອຈະໄດ້**ຊື້ເຄື່ອງນຸ່ງ**ຈາກພຣະອົງແລະ**ຊື້ຢາໃສ່ຕາ**ຈາກພຣະເຈົ້າ.

ພຣະອົງຊົງ**ຕິຕຽນຂ້ຽນສອນ**ຜູ້ທີ່ພຣະອົງຊົງຮັກຫລາຍຈົນບໍ່ສາມາດທີ່ຈະປະໃຫ້ພວກເຂົາເຮັດຜິດບາບ ຄືຫຼົງໄຫຼໃນຄວາມສົມບູນທີ່ເຂົາກຳລັງມີຢູ່. ຄວາມຈິງກໍຄືພວກເຂົາຕ້ອງ**ກັບໃຈໃຫມ່ແລະຍອມສາລະພາບ**, ແລະເສີມກຳລັງດ້ານຈິດສຳນຶກເຣື່ອງຈິດວິນຍານທີ່ຊຸດໂຊມນັ້ນໃຫ້ຫັນມາເຮັດໃຫ້ຖືກຕ້ອງ.

*ມີຄວາມຫມາຍວ່າແນວໃດໃນຄຳທີ່ວ່າ " ຢືນເຄາະຢູ່ທີ່ປະຕູ "?*

ໃນຂໍ້ 20 ພຣະເຢຊູຊົງບອກວ່າພຣະອົງຊົງຢືນເຄາະ**ຢູ່ທີ່ປະຕູ,** ລໍຖ້າທີ່ຈະເຂົ້າມາສະຖິດຢູ່ໃນຊີວິດຂອງຄຣິດສະຕຽນທີ່ກຳລັງເມີ້ງຫລັງລົງຢ່າງສະບາຍ. ພຣະອົງຊົງເອີ້ນ-ແລະຍັງຄົງຊັກຊວນ-ຄຣິສະຕຽນທັງຫລາຍໃຫ້**ເປີດປະຕູ**ເພື່ອພຣະອົງຈະໄດ້ເຂົ້າໄປຫາແລະເຂົ້າ**ຮັບປະທານອາຫານຮ່ວມ**ກັບພວກເຮົາ ແລະພວກເຮົາກໍໄດ້ຮ່ວມກັບພຣະອົງເຫມືອນກັນ. ດັ່ງນັ້ນຊີວິດຄຣິດສະຕຽນກໍຄວນຈະມີການເລີ້ມຄືນດີແລະຕັ້ງໃຈທີ່ຈະປະຕິບັດຊີວິດຄຣິດສະຕຽນໃຫ້

ເໜມາະສົມຢ່າງຈິງຈັງແທ້ອີກໃໝ່.

ຄຣິດສະຕຽນຜູ້ນຶ່ງຈະກາຍເປັນຜູ້ຊະນະກໍຕໍ່ເມື່ອເຂົາຍອມກັບໃຈໃໝ່ແລະເຊື່ອຟັງພຣະເຢຊູ. ພຣະອົງຊົງໃຫ້ສັນຍາແກ່ຜູ້ທີ່ຊະນະຄືພວກເຂົາຈະມີສ່ວນຮ່ວມນັ່ງຢູ່ເທິງບັນລັງໃນຣາຊອານາຈັກຂອງພຣະອົງ. ພຣະເຢຊູໄດ້ສັ່ງຄວາມໄປເຖິງຄຣິສຕະຈັກທີ່ເມືອງລາວດີເກັຽໂດຍສະເພາະຜູ້ທີ່ເຊື່ອມາຕລອດເວລາ, ຄືໃຫ້ອະທິບາຍຢູ່ໃນຈິດໜາຍດັ່ງນີ້: ຜູ້ໃດມີຫູຈົ່ງຟັງຂໍ້ຄວາມທີ່ພຣະວິນຍານຊົງກ່າວແກ່ຄຣິດສະຈັກທັງຫລາຍ. ທ່ານເດກຳລັງຟັງຢູ່ຫລືບໍ່?

## ບົດຮຽນຊີວິດ

ສິ່ງນຶ່ງທີ່ເປັນອັນຕະລາຍທີ່ສຸດໃຫ້ແກ່ຈິດວິນຍານຂອງຄຣິດສະຕຽນຜູ້ນຶ່ງກໍຄືໃນເວລາທີ່ທຸກສິ່ງທຸກຢ່າງລາບລື່ນໄປດ້ວຍດີກໍເລີຍລືມຊີວິດທາງດ້ານຈິດວິນຍານວ່າຈະເປັນແນວໃດ. ເຂົາຄິດວ່າທຸກສິ່ງທຸກຢ່າງດີແລ້ວ, ແລະມັນກໍເປັນສາເຫດໃຫ້ເຂົາເກີດມີຄວາມພຽງພໍແລະເມີນເສີຍ. ຄວາມຄິດເຫັນຂອງພຣະເຈົ້າແມ່ນແຕກຕ່າງໃນເຣື່ອງການດຳຣົງຊີວິດຂອງມະນຸດ, ພຣະເຢຊູຊົງຢາກໃຫ້ມີການເລີ້ມຕົ້ນຄືນດີໃໝ່ຢູ່ທຸກເວລາສຳລັບຜູ້ທີ່ກຳລັງເບື່ອງຫລັງລົງຢ່າງສະບາຍ.

ຖ້າສິ່ງນີ້ເປັນສິ່ງທີ່ບອກເຖິງຊີວິດຄຣິດສະຕຽນຂອງທ່ານທີ່ມີຄວາມສັມພັນກັບພຣະເຢຊູແລະໃນເວລານີ້ກໍເປັນໂອກາດດີທີ່ຈະເປີດປະຕູຫົວໃຈຂອງທ່ານເພື່ອໃຫ້ມີການຄືນດີກັບພຣະເຈົ້າເພາະພຣະອົງຊົງຕ້ອງການທີ່ຈະໃຫ້ຈິດວິນຍານໄດ້ຮັບການເອົາໃຈໃສ່ແລະດຳຣົງຊີວິດຢູ່ຢ່າງສັນຕິສຸກເພື່ອພຣະຜູ້ເຈົ້າຄືພຣະເຢຊູຄຣິດ.

* ແມ່ນຫຍັງແດ່ທີ່ທ່ານສາມາດເຮັດໄດ້ໃນແຕ່ລະວັນຕາມທີ່ໄດ້ຮຽນມາໃນບົດຮຽນບົດນີ້? ຄືທ່ານສາມາດຈະຂອບຄຸນພຣະເຈົ້າທຸກໆ ວັນທີ່ພຣະເຢຊູຄຣິດເປັນພຣະຜູ້ເປັນເຈົ້າຂອງການຟື້ນຄືນພຣະຊົນ.
* ປະເມີນເບິ່ງສະພາບຈິດວິນຍານຂອງທ່ານຢ່າງສັດຊື່ ແລ້ວຕັດສິນໃຈວ່າທ່ານມີຄວາມພໍໃຈ ບໍ່ຮ້ອນຮົນທາງຈິດວິນຍານໃນຕົວຂອງທ່ານຫລືບໍ່ ທີ່ທ່ານຢາກເອົາຊະນະໂດຍໃຫ້ພຣະເຈົ້າຊົງຊ່ອຍເຫລືອທ່ານ.
* ຈົ່ງທູນຂໍໃຫ້ພຣະເຈົ້າຊ່ວຍຈຸດອ່ອນທີ່ມີນັ້ນເພື່ອໃຫ້ທ່ານໄດ້ເຂັ້ມແຂງຂື້ນ.

ສິ່ງທີ່ສຳຄັນທີ່ສຸດທີ່ຊີວິດຄຣິດສະຕຽນຄວາມຊົມຊື່ນຍິນດີຄືພວກເຂົາມີຄວາມຕັ້ງໃຈເຮັດແທ້ທຳຈິງເພື່ອຈະເຕີບໃຫຍ່ຂື້ນໃນການຮັບໃຊ້. ຂ້າພະເຈົ້າອະທິຖານ ເພື່ອພຣະເຈົ້າຈະໄດ້ໃຊ້ຂ້າພະເຈົ້າທາງໃດກໍໄດ້ແລ້ວແຕ່ນ້ຳພຣະທັຍພຣະອົງໂດຍຜ່ານໂບດທີ່ຂ້າພະເຈົ້າສັງກັດຢູ່.

ທ່ານເຮັດຫຍັງແດ່ຢູ່ໃນໂບດຂອງທ່ານ? ຖ້າຫາກມີບ່ອນໃດເປັນຈຸດບັນຫາຢູ່ໃນໂບດຂອງທ່ານ, ຈົ່ງຖາມຕົວທ່ານເອງວ່າທ່ານມີພາກສ່ວນເຮັດໃຫ້ເກີດບັນຫານັ້ນຫລືບໍ່? ຫລືເປັນພາກສ່ວນໃນການແກ້ໄຂບັນຫານັ້ນຫລືບໍ່ແລະຢ້ານແຕ່ວ່າທ່ານເອງເປັນຜູ້ນຶ່ງທີ່ເປັນພາກສ່ວນຢູ່ໃນບັນຫານັ້ນ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.com ແປໂດຍ AP